ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 256 /ປປ

ນະຄອນຫຼວງວຽງຈັນ, ວັນທີ 26 ກໍລະກົດ 2019

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ.

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍຕອບການໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດ ຜູ້ສົ່ງອອກ, ສະບັບເລກທີ 09/ສພຊ, ລົງວັນທີ 14 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 15/ຄປຈ, ລົງວັນທີ 12 ກໍລະກົດ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 09 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 14 / 06 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ໃນວາລະກອງປະຊຸມ ຄັ້ງວັນທີ 14 ມິຖຸນາ 2019.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 65 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2019

# ກົດໝາຍ
# ວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ເພື່ອປົກປ້ອງຜູ້ຜະລິດພາຍໃນ ທີ່ໄດ້ຮັບຜົນກະທົບຈາກການແຂ່ງຂັນທີ່ບໍ່ເປັນທຳ ແນໃສ່ຮັບປະກັນໃຫ້ຜູ້ຜະລິດສິນຄ້າພາຍໃນສາມາດປັບປຸງຕົນເອງ, ມີຄວາມເຂັ້ມແຂງ, ເຕີບໃຫຍ່ຂະຫຍາຍຕົວ ແລະ ສາມາດແຂ່ງຂັນກັບສິນຄ້ານຳເຂົ້າ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ**

ການທຸ່ມຕະຫຼາດ ແມ່ນ ການສົ່ງອອກສິນຄ້າຈາກປະເທດຜູ້ສົ່ງອອກເຂົ້າມາໃນ ສປປ ລາວ ຊຶ່ງມີລາຄາສົ່ງອອກ ຕໍ່າກວ່າລາຄາປົກກະຕິຂອງສິນຄ້າທີ່ຄ້າຍຄືກັນ ທີ່ຈຳໜ່າຍພາຍໃນປະເທດຜູ້ສົ່ງອອກ ເພື່ອຜົນປະໂຫຍດທາງການຄ້າ.

ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ແມ່ນ ການຊ່ວຍເຫຼືອ ຫຼື ການສະໜັບສະໜູນ ຂອງລັດຖະບານ ຫຼື ອົງການຈັດຕັ້ງໃດໜຶ່ງ ຂອງປະເທດຜູ້ສົ່ງອອກ ໃຫ້ແກ່ວິສາຫະກິດ ແລະ ອຸດສາຫະກຳ ເພື່ອຜົນປະໂຫຍດທາງການຄ້າ.

ການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ແມ່ນ ການນຳໃຊ້ມາດຕະການທາງດ້ານພາສີ ໃນໄລຍະເວລາໃດໜຶ່ງ ຕໍ່ສິນຄ້ານຳເຂົ້າ ທີ່ມີການທຸ່ມຕະຫຼາດ ແລະ ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຊຶ່ງເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນ ໄດ້ຮັບຄວາມເສຍຫາຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຜະລິດສິນຄ້າພາຍໃນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ລາວ ຫຼື ຕ່າງປະເທດ ທີ່ດຳເນີນທຸລະກິດ ໃນ ສປປ ລາວ ທີ່ຜະລິດສິນຄ້າ ອຸດສາຫະກຳ ແລະ ກະສິກຳ ທີ່ຄ້າຍຄືກັນ ກັບສິນຄ້ານຳເຂົ້າ ຊຶ່ງມີຜົນຜະລິດ ລວມ ກວມອັດຕາສ່ວນທີ່ສຳຄັນຂອງການຜະລິດທັງໝົດຂອງສິນຄ້າດັ່ງກ່າວ;

2. **ສິນຄ້າທີ່ຄ້າຍຄືກັນ** ໝາຍເຖິງ ສິນຄ້າທີ່ມີຄຸນລັກສະນະສະເພາະພື້ນຖານທີ່ຄືກັນ ຫຼື ຄ້າຍຄືກັນ ກັບ ສິນຄ້າທີ່ຜະລິດໃນ ສປປ ລາວ;

3. **ສິນຄ້າທີ່ຖືກພິຈາລະນາ** ໝາຍເຖິງ ສິນຄ້າທີ່ນຳເຂົ້າມາ ສປປ ລາວ ຊຶ່ງມີຂໍ້ມູນບົ່ງຢືນເບື້ອງຕົ້ນວ່າມີ ການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ;

4. **ປະເທດຜູ້ສົ່ງອອກ** ໝາຍເຖິງ ປະເທດສົ່ງອອກສິນຄ້າທີ່ຖືກພິຈາລະນາເຂົ້າມາໃນ ສປປ ລາວ;

5. **ຜູ້ສົ່ງອອກ** ໝາຍເຖິງ ຜູ້ສົ່ງອອກຂອງຕ່າງປະເທດທີ່ສົ່ງສິນຄ້າເຂົ້າມາໃນ ສປປ ລາວ;

6. **ຜູ້ມີສ່ວນກ່ຽວຂ້ອງ** ໝາຍເຖິງ ຜູ້ຜະລິດ, ຜູ້ສົ່ງອອກ ຫຼື ຜູ້ນຳເຂົ້າສິນຄ້າ ແລະ ລັດຖະບານ ຂອງ ປະເທດຜູ້ສົ່ງອອກສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ, ກຸ່ມ, ສະມາຄົມ ຫຼື ການຈັດຕັ້ງທີ່ ເປັນຕົວແທນປົກປ້ອງຜົນປະໂຫຍດຂອງຜູ້ຜະລິດສິນຄ້າພາຍໃນ;

7. **ບຸກຄົນທີສາມ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ກ່ຽວຂ້ອງກັບການນຳເຂົ້າ ຫຼື ສົ່ງອອກສິນຄ້າທີ່ ຖືກພິຈາລະນາ;

8. **ຄວາມເສຍຫາຍຢ່າງຫຼວງຫຼາຍ** ໝາຍເຖິງ ຄວາມເສຍຫາຍຈາກການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະ ຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຊຶ່ງເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນ ໂດຍລວມໄດ້ຮັບຜົນ ກະທົບຢ່າງຮ້າຍແຮງ;

9. **ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ** ໝາຍເຖິງ ເຫດການທີ່ໃກ້ຈະເກີດຂຶ້ນກັບຜູ້ ຜະລິດສິນຄ້າພາຍໃນ ຊຶ່ງຈະພາໃຫ້ມີຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ແນ່ນອນ;

10. **ອຸປະສັກທີ່ຖ່ວງດຶງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ** ໝາຍເຖິງ ຜົນກະທົບຕໍ່ວິ ສາຫະກິດພາຍໃນທີ່ກຳລັງສ້າງຕັ້ງ ຫຼື ດຳເນີນ ແລະ ຂະຫຍາຍທຸລະກິດ ຢູ່ ສປປ ລາວ;

11. **ສະເລ່ຍຖ່ວງນ້ຳໜັກ** ໝາຍເຖິງ ການຄິດໄລ່ຈາກຜົນລວມຂອງລາຄາສິນຄ້າ ຄູນໃຫ້ ປະລິມານສິນ ຄ້າ ແລະ ຫານໃຫ້ ຜົນລວມຂອງປະລິມານສິນຄ້າ;

12. **ມາດຕະການທາງດ້ານພາສີ** ໝາຍເຖິງ ການວາງເງິນຄ້ຳປະກັນຕາມການຄິດໄລ່ອັດຕາພາສີ ຫຼື ການ ເພີ່ມອັດຕາພາສີນຳເຂົ້າຕໍ່ສິນຄ້າທີ່ຖືກນຳໃຊ້ມາດຕະການ;

13. **ຜູ້ສະໜັບສະໜູນ** ໝາຍເຖິງ ຜູ້ຜະລິດສິນຄ້າທີ່ຄ້າຍຄືກັນພາຍໃນປະເທດ ທີ່ເຫັນດີໃຫ້ມີການດຳ ເນີນການສືບຫາຂໍ້ມູນຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ;

14. **ຜູ້ຄັດຄ້ານ** ໝາຍເຖິງ ຜູ້ຜະລິດສິນຄ້າທີ່ຄ້າຍຄືກັນພາຍໃນປະເທດ ທີ່ບໍ່ເຫັນດີໃຫ້ມີການດຳເນີນການ ສືບຫາຂໍ້ມູນຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ;

15. **ຜູ້ບໍ່ອອກສຽງ** ໝາຍເຖິງ ຜູ້ຜະລິດສິນຄ້າທີ່ຄ້າຍຄືກັນພາຍໃນປະເທດ ທີ່ບໍ່ສະໜັບສະໜູນ ແລະ ບໍ່ ຄັດຄ້ານ ໃຫ້ມີການດຳເນີນການສືບຫາຂໍ້ມູນຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນຂອງປະ ເທດຜູ້ສົ່ງອອກ;

16. **ສ່ວນແບ່ງຕະຫຼາດ** ໝາຍເຖິງ ອັດຕາສ່ວນຮ້ອຍຂອງປະລິມານການຈຳໜ່າຍສິນຄ້າໃດໜຶ່ງ ເມື່ອທຽບ ໃສ່ຍອດຈຳໜ່າຍທັງໝົດຂອງສິນຄ້າປະເພດດຽວກັນໃນຕະຫຼາດ;

17. **ຜະລິດຕະພາບ** ໝາຍເຖິງ ປະສິດທິພາບໃນການຜະລິດສິນຄ້າ ຂອງຜູ້ຜະລິດສິນຄ້າ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ**

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ດ້ວຍການກຳນົດມາດຕະການ ເພື່ອຕອບໂຕ້ການຄ້າທີ່ບໍ່ເປັນທຳຈາກການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ, ສ້າງສະພາບແວດລ້ອມ ແລະ ເງື່ອນໄຂທີ່ເອື້ອອຳນວຍ ໃຫ້ແກ່ຜູ້ຜະລິດສິນຄ້າພາຍໃນ ໃຫ້ສາມາດເຕີບໂຕ ຂະຫຍາຍຕົວ ແລະ ສາມາດແຂ່ງຂັນໄດ້.

ລັດ ສະໜອງ ງົບປະມານ, ບຸກຄະລາກອນ, ພາຫະນະ, ວັດຖຸປະກອນ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ ແລະ ປະສິດທິພາບ.

**ມາດຕາ 5 ຫຼັກການກ່ຽວກັບການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ**

ການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ໃຫ້ປະຕິບັດຕາມຫຼັກການ ຕົ້ນຕໍ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ ແລະ ກົດໝາຍ;
2. ຮັບປະກັນຄວາມວ່ອງໄວ, ໂປ່ງໃສ, ພາວະວິໄສ ແລະ ຍຸຕິທຳ;
3. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຜະລິດສິນຄ້າຢູ່ພາຍໃນ ສປປ ລາວ ແລະ ຜູ້ນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ດ້ວຍການແລກປ່ຽນຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ ແລະ ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ
### ໝວດທີ 1
### ການທຸ່ມຕະຫຼາດ

**ມາດຕາ 8 ການທຸ່ມຕະຫຼາດ**

ການທຸ່ມຕະຫຼາດ ດຳເນີນດ້ວຍການກຳນົດລາຄາສົ່ງອອກ ຂອງສິນຄ້າໃດໜຶ່ງມາຍັງ ສປປ ລາວ ຕ່ຳກວ່າລາຄາປົກກະຕິຂອງສິນຄ້າດັ່ງກ່າວ ທີ່ຈຳໜ່າຍຢູ່ພາຍໃນປະເທດຜູ້ສົ່ງອອກ.

**ມາດຕາ 9 ລາຄາສົ່ງອອກ**

ລາຄາສົ່ງອອກ ແມ່ນ ລາຄາສິນຄ້າຈາກປະເທດຜູ້ສົ່ງອອກ ທີ່ສົ່ງເຂົ້າມາຈຳໜ່າຍໃນ ສປປ ລາວ ໂດຍມີການຊຳລະຕົວຈິງ ຫຼື ມີແຜນການຊຳລະ.

ໃນກໍລະນີບໍ່ມີລາຄາສົ່ງອອກ ຫຼື ລາຄາສົ່ງອອກບໍ່ໜ້າເຊື່ອຖື ໃຫ້ຄິດໄລ່ລາຄາສົ່ງອອກສິນຄ້າ ທີ່ໄດ້ຈຳໜ່າຍຄັ້ງທຳອິດ ໃຫ້ແກ່ຜູ້ຊື້ທີ່ບໍ່ມີສ່ວນກ່ຽວຂ້ອງ.

ໃນກໍລະນີທີ່ສິນຄ້າ ບໍ່ໄດ້ມີການຈຳໜ່າຍໃຫ້ແກ່ຜູ້ຊື້ທີ່ບໍ່ມີສ່ວນກ່ຽວຂ້ອງ ຫຼື ບໍ່ໄດ້ຈຳໜ່າຍສິນຄ້າໃນສະພາບເດີມ ທີ່ໄດ້ນຳເຂົ້າໃນເບື້ອງຕົ້ນ ໃຫ້ກຳນົດລາຄາສົ່ງອອກບົນພື້ນຖານທີ່ສົມເຫດສົມຜົນ.

**ມາດຕາ 10 ລາຄາປົກກະຕິ**

ລາຄາປົກກະຕິ ແມ່ນ ລາຄາສິນຄ້າທີ່ຄ້າຍຄືກັນ ທີ່ຈຳໜ່າຍເພື່ອຊົມໃຊ້ພາຍໃນປະເທດຜູ້ສົ່ງອອກ ໂດຍມີການຊຳລະຕົວຈິງ ຫຼື ມີແຜນການຊຳລະ ໃນສະພາບການຄ້າປົກກະຕິ ຊຶ່ງເປັນລາຄາທີ່ສາມາດນຳມາປຽບທຽບໄດ້ກັບລາຄາສົ່ງອອກມາຍັງ ສປປ ລາວ.

ໃນກໍລະນີບໍ່ມີການຈຳໜ່າຍສິນຄ້າທີ່ຄ້າຍຄືກັນ ໃນຕະຫຼາດພາຍໃນຂອງປະເທດຜູ້ສົ່ງອອກ ຫຼື ການຈຳໜ່າຍສິນຄ້າດັ່ງກ່າວ ບໍ່ສາມາດນຳມາປຽບທຽບໄດ້ນັ້ນ ໃຫ້ກຳນົດລາຄາປົກກະຕິ ໂດຍອີງໃສ່ລາຄາໃດໜຶ່ງ ດັ່ງນີ້:

1. ລາຄາສົ່ງອອກສິນຄ້າທີ່ຄ້າຍຄືກັນ ໄປຍັງປະເທດທີສາມ ທີ່ມີການນຳເຂົ້າສິນຄ້າທີ່ຖືກພິຈາລະນາ ຖ້າມີເຫດຜົນທີ່ເຊື່ອໄດ້ວ່າ ລາຄານັ້ນສະແດງເຖິງລາຄາໃນຕະຫຼາດປະເທດຜູ້ສົ່ງອອກ;
2. ລາຄາຄິດໄລ່ຈາກຕົ້ນທຶນການຜະລິດຂອງປະເທດແຫຼ່ງກຳເນີດສິນຄ້າ ບວກກັບຄ່າໃຊ້ຈ່າຍໃນການບໍລິຫານ, ການຈຳໜ່າຍ ແລະ ຄ່າໃຊ້ຈ່າຍອື່ນ ລວມທັງກຳໄລທີ່ເກີດຂຶ້ນ.

ໃນກໍລະນີລາຄາຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ແລະ ວັກທີສອງ ຂໍ້ 1 ຂອງມາດຕານີ້ ຫາກຕໍ່າກວ່າຕົ້ນທຶນການຜະລິດ ບວກກັບຄ່າໃຊ້ຈ່າຍໃນ ການບໍລິຫານ, ການຈຳໜ່າຍ ແລະ ຄ່າໃຊ້ຈ່າຍອື່ນ ແມ່ນບໍ່ໃຫ້ນຳມາກຳນົດເປັນລາຄາປົກກະຕິ.

ສຳລັບວິທີການຄິດໄລ່ລະອຽດກ່ຽວກັບການກຳນົດລາຄາປົກກະຕິ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ການກຳນົດອັດຕາການທຸ່ມຕະຫຼາດ**

ການກຳນົດອັດຕາການທຸ່ມຕະຫຼາດ ແມ່ນ ການຄິດໄລ່ສ່ວນຕ່າງ ລະຫວ່າງ ລາຄາປົກກະຕິ ກັບ ລາຄາສົ່ງອອກ ທີ່ດຳເນີນການຄ້າໃນລະດັບ ແລະ ໄລຍະເວລາດຽວກັນ ຊຶ່ງມີວິທີການປຽບທຽບໃດໜຶ່ງ ດັ່ງນີ້:

1. ລາຄາປົກກະຕິສະເລ່ຍຖ່ວງນ້ຳໜັກ ກັບ ລາຄາສົ່ງອອກສະເລ່ຍຖ່ວງນ້ຳໜັກ;
2. ລາຄາປົກກະຕິ ກັບ ລາຄາສົ່ງອອກຂອງການເຮັດທຸລະກຳທາງການຄ້າແຕ່ລະຄັ້ງ;
3. ໃນກໍລະນີທີ່ລາຄາສົ່ງອອກ ມີຄວາມແຕກຕ່າງກັນທາງດ້ານຜູ້ຊື້, ພື້ນທີ່ ຫຼື ໄລຍະເວລາທີ່ສົ່ງອອກ, ໃຫ້ປຽບທຽບ ລະຫວ່າງລາຄາປົກກະຕິສະເລ່ຍຖ່ວງນ້ຳໜັກ ກັບ ລາຄາສົ່ງອອກຂອງການເຮັດທຸລະກຳທາງການຄ້າແຕ່ລະຄັ້ງ.

ຖ້າລາຄາປົກກະຕິ ແລະ ລາຄາສົ່ງອອກທີ່ນຳມາປຽບທຽບຫາກບໍ່ແມ່ນລາຄາໃນລະດັບ ແລະ ໄລຍະເວລາດຽວກັນ ໃຫ້ພິຈາລະນາປັດໄຈ ທີ່ສົ່ງຜົນກະທົບຕໍ່ການປຽບທຽບ ເຊັ່ນ ເງື່ອນໄຂ ແລະ ໄລຍະເວລາ ຂອງການຈຳໜ່າຍ, ການເກັບອາກອນ, ລະດັບການຄ້າ, ປະລິມານ, ຄຸນລັກສະນະສະເພາະຂອງສິນຄ້າ.

ເມື່ອການປັບທຽບລາຄາ ມີຄວາມກ່ຽວຂ້ອງກັບການແລກປ່ຽນສະກຸນເງິນ ໃຫ້ນຳໃຊ້ອັດຕາແລກປ່ຽນຂອງທະນາຄານທຸລະກິດໃດໜຶ່ງ ຂອງວັນທີ່ມີການຈຳໜ່າຍສິນຄ້າ. ຖ້າມີການຕົກລົງກຳນົດອັດຕາແລກປ່ຽນເງິນຕາລ່ວງໜ້າ ໃຫ້ປະຕິບັດຕາມອັດຕາທີ່ໄດ້ຕົກລົງກັນນັ້ນ.

ສຳລັບສູດຄິດໄລ່ການກຳນົດອັດຕາການທຸ່ມຕະຫຼາດ ແລະ ການປັບທຽບລາຄາປົກກະຕິ ແລະ ລາຄາສົ່ງອອກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ

### ມາດຕາ 12 ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ

ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ປະກອບມີ ດັ່ງນີ້:

1. ການຊ່ວຍເຫຼືອທາງດ້ານການເງິນ;
2. ການສະໜັບສະໜູນດ້ານລາຍໄດ້ ຫຼື ດ້ານລາຄາ.

### ມາດຕາ 13 ການຊ່ວຍເຫຼືອທາງດ້ານການເງິນ

ການຊ່ວຍເຫຼືອທາງດ້ານການເງິນ ແມ່ນ ການຊ່ວຍເຫຼືອຈາກ ລັດຖະບານ ຫຼື ອົງການຈັດຕັ້ງໃດໜຶ່ງຂອງປະເທດຜູ້ສົ່ງອອກ ຊຶ່ງມີວິທີການ ດັ່ງນີ້:

1. ສະໜອງເງິນໂດຍກົງແກ່ວິສາຫະກິດ ແລະ ອຸດສາຫະກຳໃນຮູບແບບ ເງິນຊ່ວຍເຫຼືອລ້າ, ເງິນກູ້ຢືມ ແລະ ຊື້ຮຸ້ນ ຫຼື ໂດຍທາງອ້ອມ ໃນຮູບແບບການຄ້ຳປະກັນເງິນກູ້ຢືມ;
2. ຍົກເວັ້ນ ຫຼື ຫຼຸດຜ່ອນ ພັນທະຕ່າງໆທາງດ້ານການເງິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໃຫ້ແກ່ວິສາຫະກິດ ແລະ ອຸດສາຫະກຳ;
3. ສະໜອງສິນຄ້າ ຫຼື ການບໍລິການ ນອກຈາກໂຄງລ່າງພື້ນຖານທົ່ວໄປ ຫຼື ຊື້ສິນຄ້າຈາກວິສາຫະກິດ ແລະ ອຸດສາຫະກຳ;
4. ຈ່າຍເງິນແກ່ກອງທຶນ ຫຼື ມອບໃຫ້ພາກສ່ວນເອກະຊົນປະຕິບັດ ໜຶ່ງ ຫຼື ຫຼາຍ ວິທີການ ຕາມທີ່ໄດ້ກຳນົດໃນຂໍ້ 1, 2 ແລະ 3 ຂອງມາດຕານີ້.

### ມາດຕາ 14 ການສະໜັບສະໜູນດ້ານລາຍໄດ້ ຫຼື ດ້ານລາຄາ

ການສະໜັບສະໜູນດ້ານລາຍໄດ້ ຫຼື ດ້ານລາຄາ ແມ່ນ ການເພີ່ມການສົ່ງອອກສິນຄ້າໃດໜຶ່ງ ໂດຍກົງ ຫຼື ທາງອ້ອມ ຫຼື ຫຼຸດການນຳເຂົ້າສິນຄ້າຈາກຕ່າງປະເທດ.

### ມາດຕາ 15 ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ທີ່ຈະຖືກນຳໃຊ້ມາດຕະການຕອບໂຕ້

ລັດຖະບານ ແຫ່ງ ສປປ ລາວ ຈະນຳໃຊ້ມາດຕະການຕອບໂຕ້ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກໃນຮູບການໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ແລະ 14 ຂອງກົດໝາຍສະບັບນີ້ ທີ່ເປັນການຊ່ວຍໜູນສະເພາະໃຫ້ແກ່ ວິສາຫະກິດ, ກຸ່ມວິສາຫະກິດ, ອຸດສາຫະກຳ ຫຼື ກຸ່ມອຸດສາຫະກຳໃດໜຶ່ງ ທີ່ຕິດພັນກັບການສົ່ງອອກສິນຄ້າເຂົ້າມາໃນ ສປປ ລາວ ໃນກໍລະນີ ດັ່ງນີ້:

1. ການຊ່ວຍໜູນໃນທາງກົດໝາຍ ຫຼື ການຈັດຕັ້ງປະຕິບັດ;
2. ການຊ່ວຍໜູນສຳລັບເຂດພື້ນທີ່ ທີ່ກຳນົດໄວ້ສະເພາະ;

3. ການຊ່ວຍໜູນເພື່ອເພີ່ມປະລິມານການສົ່ງອອກສິນຄ້າ;

4. ການຊ່ວຍໜູນໃຫ້ມີການນໍາໃຊ້ສິນຄ້າພາຍໃນຂອງກັນ ເພື່ອທົດແທນການນໍາເຂົ້າ.

ນອກຈາກການຊ່ວຍໜູນສະເພາະທີ່ໄດ້ກໍານົດໄວ້ໃນຂໍ້ 1, 2, 3 ແລະ 4 ຂອງມາດຕານີ້ ໃຫ້ພິຈາລະນາປັດໃຈອື່ນຕື່ມ ເຊັ່ນ ຈໍານວນວິສາຫະກິດ, ກຸ່ມວິສາຫະກິດ, ອຸດສາຫະກໍາ ຫຼື ກຸ່ມອຸດສາຫະກໍາ ທີ່ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ, ປະລິມານການຊ່ວຍໜູນຂອງປະເທດຜູ້ສົ່ງອອກ, ໄລຍະເວລາ ແລະ ຮູບແບບຂອງການຊ່ວຍໜູນຂອງປະເທດຜູ້ສົ່ງອອກ.

## ມາດຕາ 16 ການຄິດໄລ່ປະລິມານການຊ່ວຍໜູນຂອງປະເທດຜູ້ສົ່ງອອກ

ການຄິດໄລ່ປະລິມານການຊ່ວຍໜູນ ແມ່ນ ການຄິດໄລ່ຜົນປະໂຫຍດທີ່ໄດ້ຮັບຈາກການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຕາມໄລຍະເວລາ ໂດຍກໍານົດເປັນຈໍານວນມູນຄ່າການຊ່ວຍໜູນ ຫຼື ສ່ວນຮ້ອຍຂອງການຊ່ວຍໜູນ ຕໍ່ຫົວໜ່ວຍສິນຄ້າທີ່ສົ່ງອອກມາຍັງ ສປປ ລາວ ເພື່ອເປັນພື້ນຖານໃຫ້ແກ່ການນໍາໃຊ້ມາດຕະການຕອບໂຕ້.

ການຄິດໄລ່ຜົນປະໂຫຍດທີ່ໄດ້ຮັບຈາກການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

1. ສໍາລັບຮູບແບບເງິນຊ່ວຍເຫຼືອລ້າ ໃຫ້ຄິດໄລ່ຈາກຈໍານວນເງິນຊ່ວຍເຫຼືອລ້າທີ່ ວິສາຫະກິດ, ກຸ່ມວິສາຫະກິດ, ອຸດສາຫະກໍາ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງ ໄດ້ຮັບຕົວຈິງ;

2. ສໍາລັບຮູບແບບເງິນກູ້ຢືມໃນອັດຕາດອກເບ້ຍຕໍ່າ ໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ອັດຕາດອກເບ້ຍເງິນກູ້ຢືມຂອງທະນາຄານ ທີ່ວິສາຫະກິດ, ກຸ່ມວິສາຫະກິດ, ອຸດສາຫະກໍາ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງຕ້ອງຈ່າຍ ກັບ ອັດຕາດອກເບ້ຍເງິນກູ້ຢືມ ທີ່ຈ່າຍໃຫ້ແກ່ລັດຖະບານ;

3. ສໍາລັບຮູບແບບການຊື້ຮຸ້ນ ໃຫ້ຄິດໄລ່ຈາກຈໍານວນທຶນຕົວຈິງທີ່ວິສາຫະກິດ ໄດ້ຮັບຈາກການຈໍາໜ່າຍຮຸ້ນໃຫ້ແກ່ລັດຖະບານ;

4. ສໍາລັບຮູບແບບການຄໍ້າປະກັນເງິນກູ້ຢືມ ໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ອັດຕາດອກເບ້ຍເງິນກູ້ຢືມຂອງທະນາຄານທີ່ບໍ່ມີການຄໍ້າປະກັນ ກັບ ອັດຕາດອກເບ້ຍເງິນກູ້ຢືມທີ່ໄດ້ຮັບການຄໍ້າປະກັນ ຈາກລັດຖະບານ;

5. ສໍາລັບການສະໜອງສິນຄ້າ ຫຼື ການບໍລິການ ໃນອັດຕາທີ່ໜ້ອຍກວ່າຄ່າຕອບແທນທີ່ຄວນໄດ້ຮັບ ໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ລາຄາປົກກະຕິຂອງສິນຄ້າ ຫຼື ການບໍລິການໃນຕະຫຼາດ ແລະ ລາຄາ ທີ່ວິສາຫະກິດ, ກຸ່ມວິສາຫະກິດ, ອຸດສາຫະກໍາ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງໄດ້ຈ່າຍຕົວຈິງ ໃຫ້ແກ່ລັດຖະບານ;

6. ສໍາລັບການຊື້ສິນຄ້າ ໃນອັດຕາທີ່ຫຼາຍກວ່າຄ່າຕອບແທນທີ່ຄວນໄດ້ຮັບ ໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ລາຄາທີ່ລັດຖະບານໄດ້ຈ່າຍໃຫ້ຕົວຈິງ ແລະ ລາຄາປົກກະຕິຂອງສິນຄ້າດັ່ງກ່າວໃນຕະຫຼາດ;

7. ສໍາລັບການຍົກເວັ້ນ ຫຼື ຫຼຸດຜ່ອນ ພັນທະຕ່າງໆທາງດ້ານການເງິນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ໃຫ້ຄິດໄລ່ຈາກຄວາມແຕກຕ່າງ ລະຫວ່າງ ຈໍານວນເງິນທີ່ວິສາຫະກິດຕ້ອງຈ່າຍໃຫ້ແກ່ລັດຖະບານ ກັບ ຈໍານວນເງິນທີ່ວິສາຫະກິດ, ກຸ່ມວິສາຫະກິດ, ອຸດສາຫະກໍາ ຫຼື ກຸ່ມອຸດສາຫະກໍາໃດໜຶ່ງໄດ້ຈ່າຍຕົວຈິງ.

ນອກຈາກ ການຊ່ວຍໜູນ ເຈັດກໍລະນີ ທີ່ໄດ້ກໍານົດໄວ້ເທິງນີ້ ໃຫ້ນໍາໃຊ້ວິທີຄິດໄລ່ອື່ນ ບົນພື້ນຖານຄວາມຍຸຕິທໍາ ແລະ ສົມເຫດສົມຜົນ.

## ພາກທີ III
## ການກຳນົດຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ

### ມາດຕາ 17 ຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ

ຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ແມ່ນ ການສູນເສຍຜົນປະໂຫຍດທາງການຄ້າຈາກການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການອຸດໜູນ ຂອງປະເທດຜູ້ສົ່ງອອກ ຊຶ່ງເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນ ໄດ້ຮັບຄວາມເສຍຫາຍ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີຄວາມເສຍຫາຍຢ່າງຫຼວງຫຼາຍ;
2. ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ;
3. ເປັນອຸປະສັກຖ່ວງດຶງຢ່າງໃຫຍ່ຫຼວງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ.

ຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ຕ້ອງມີຄວາມກ່ຽວພັນກັບການທຸ່ມຕະຫຼາດ ຫຼື ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງກົດໝາຍສະບັບນີ້ ແລະ ໃນກໍລະນີຄວາມເສຍຫາຍ ຫາກກ່ຽວຂ້ອງກັບຫຼາຍປະເທດ ສາມາດປະເມີນລວມກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

### ມາດຕາ 18 ການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍ

ການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ຈາກການທຸ່ມຕະຫຼາດ ຫຼື ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕ້ອງພິຈາລະນາຈາກຂໍ້ມູນຫຼັກຖານ ດັ່ງນີ້:

1. ປະລິມານການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການອຸດໜູນ ຂອງປະເທດຜູ້ສົ່ງອອກ ເພີ່ມຂຶ້ນແບບເດັດຖານ ຫຼື ທຽບຖານ ເມື່ອທຽບໃສ່ການຜະລິດ ຫຼື ການບໍລິໂພກພາຍໃນ ສປປ ລາວ;
2. ຜົນກະທົບຂອງສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕໍ່ລາຄາສິນຄ້າທີ່ຄ້າຍຄືກັນໃນ ສປປ ລາວ ຊຶ່ງເຮັດໃຫ້ຜູ້ຜະລິດພາຍໃນ ຕ້ອງຫຼຸດລາຄາ, ຖືກກົດລາຄາ ຫຼື ຈຳໜ່າຍສິນຄ້າໃນລາຄາຂາດທຶນ;
3. ຜົນກະທົບຂອງສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕໍ່ຜູ້ຜະລິດສິນຄ້າພາຍໃນ ໂດຍພິຈາລະນາຕາມປັດໄຈ ການຫຼຸດລົງຕົວຈິງ ຫຼື ມີທ່າອ່ຽງຫຼຸດລົງຂອງຍອດຈຳໜ່າຍ, ກຳໄລ, ຜົນຜະລິດ, ສ່ວນແບ່ງຕະຫຼາດ, ຜະລິດຕະພາບ, ຜົນຕອບແທນຈາກການລົງທຶນ ຫຼື ກຳລັງການຜະລິດ; ປັດໄຈທີ່ມີຜົນກະທົບຕໍ່ລາຄາພາຍໃນປະເທດ ແລະ ຜົນກະທົບຕົວຈິງ ລວມທັງທ່າອ່ຽງທີ່ມີຜົນກະທົບທາງລົບຕໍ່ກະແສເງິນສົດ, ສິນຄ້າໃນສາງ, ການຈ້າງງານ, ຄ່າແຮງງານ, ອັດຕາການເຕີບໂຕຂອງທຸລະກິດ, ຄວາມສາມາດໃນການເພີ່ມທຶນ ຫຼື ການລົງທຶນ.

ສຳລັບວິທີການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 19 ການກຳນົດໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ

ການກຳນົດໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ຈາກການທຸ່ມຕະຫຼາດ ຫຼື ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕ້ອງພິຈາລະນາຕາມຂໍ້ມູນຕົວຈິງ ທີ່ມີເຫດການປ່ຽນແປງ ແລະ ຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ການທຸ່ມຕະຫຼາດ ຫຼື ການອຸດໜູນ ຂອງປະເທດຜູ້ສົ່ງອອກນັ້ນ ໃກ້ຈະເກີດຂຶ້ນ ແລະ ກໍ່ໃຫ້ເກີດຄວາມເສຍຫາຍຢ່າງແນ່ນອນ ໂດຍພິຈາລະນາຕາມປັດໄຈໃດໜຶ່ງ ດັ່ງນີ້:

1. ການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ມີການເພີ່ມຂຶ້ນໃນອັດຕາສ່ວນ ຫຼື ປະລິມານ ທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍ;

2. ຄວາມອາດສາມາດໃນການຈຳໜ່າຍສິນຄ້າຂອງຜູ້ສົ່ງອອກ ຈະເພີ່ມສູງຂຶ້ນໃນອະນາຄົດອັນໃກ້ ແລະ ຊີ້ໃຫ້ເຫັນຄວາມເປັນໄປໄດ້ ອາດມີການສົ່ງອອກສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ເຂົ້າມາໃນ ສປປ ລາວ ຫຼາຍຂຶ້ນ;

3. ລາຄາຂອງການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ຈະເຮັດໃຫ້ມີການກົດລາຄາ ຫຼື ຈຳໜ່າຍໃນລາຄາຂາດທຶນຂອງສິນຄ້າພາຍໃນ ແລະ ຄວາມຕ້ອງການໃນການນຳເຂົ້າສິນຄ້າດັ່ງກ່າວ ມີທ່າອ່ຽງເພີ່ມຂຶ້ນ;

4. ປະລິມານສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ທີ່ມີໃນສາງ ຊຶ່ງກຳລັງດຳເນີນການສືບຫາຂໍ້ມູນ.

ສຳລັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກນັ້ນ ຍັງຕ້ອງພິຈາລະນາຕື່ມ ກ່ຽວກັບຮູບແບບການຊ່ວຍໜູນ ແລະ ທ່າອ່ຽງຜົນກະທົບທາງການຄ້າ ທີ່ອາດຈະເກີດຂຶ້ນ.

## ມາດຕາ 20 ການກຳນົດອຸປະສັກທີ່ຖ່ວງດຶງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ

ການກຳນົດອຸປະສັກທີ່ຖ່ວງດຶງຕໍ່ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນ ຕ້ອງພິຈາລະນາຈາກຂໍ້ມູນຫຼັກຖານຕົວຈິງ ທີ່ສະແດງໃຫ້ເຫັນວ່າ ການສ້າງຕັ້ງ ຫຼື ພັດທະນາວິສາຫະກິດພາຍໃນນັ້ນ ມີຄວາມຊັກຊ້າ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ແຜນສ້າງຕັ້ງ ແລະ ພັດທະນາວິສາຫະກິດພາຍໃນ;
2. ຄວາມສາມາດໃນການຜະລິດ ແລະ ຜົນຜະລິດ;
3. ປະລິມານ ແລະ ມູນຄ່າການຈຳໜ່າຍສິນຄ້າພາຍໃນ;
4. ສ່ວນແບ່ງຕະຫຼາດ, ລາຍຮັບ ແລະ ກຳໄລ;
5. ການສົ່ງອອກ ແລະ ນຳເຂົ້າສິນຄ້າທີ່ຖືກພິຈາລະນາ;
6. ສິນຄ້າໃນສາງ;
7. ການຈ້າງງານ ແລະ ຄ່າແຮງງານ;
8. ກໍລະນີອື່ນ ທີ່ເຫັນວ່າເໝາະສົມ.

## ມາດຕາ 21 ການກຳນົດຄວາມກ່ຽວພັນລະຫວ່າງ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ

ການກຳນົດຄວາມກ່ຽວພັນລະຫວ່າງ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ຕ້ອງພິຈາລະນາຈາກຂໍ້ມູນຫຼັກຖານທີ່ກ່ຽວຂ້ອງທັງໝົດຂອງການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18, 19 ແລະ 20 ຂອງກົດໝາຍສະບັບນີ້.

ປັດໃຈອື່ນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ກໍຕ້ອງພິຈາລະນາເຊັ່ນດຽວກັນ ເຊັ່ນ ປະລິມານ ແລະ ລາຄາຂອງສິນຄ້ານຳເຂົ້າທີ່ບໍ່ໄດ້ຈຳໜ່າຍໃນລາຄາທຸ່ມຕະຫຼາດ ຫຼື ບໍ່ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ, ການປ່ຽນແປງດ້ານຄວາມຕ້ອງການ ຫຼື ການປ່ຽນແປງຂອງຮູບແບບການບໍລິໂພກ, ການຈຳກັດທາງການຄ້າ ແລະ ການແຂ່ງຂັນ ລະຫວ່າງ ຜູ້ຜະລິດສິນຄ້າພາຍໃນ ແລະ ຕ່າງປະເທດ, ການພັດທະນາທາງດ້ານເຕັກໂນໂລຊີ, ນະໂຍບາຍການຜະລິດ ເພື່ອສົ່ງອອກ ແລະ ຄວາມສາມາດໃນການຜະລິດ ແຕ່ບໍ່ໃຫ້ຖືວ່າເປັນ

ປັດໄຈທີ່ກ່ຽວພັນກັບການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ທີ່ບໍ່ນຳມາພິຈາລະນານຳໃຊ້ມາດຕະການຕອບໂຕ້.

### ມາດຕາ 22 ການປະເມີນຄວາມເສຍຫາຍລວມກັນ

ການປະເມີນຄວາມເສຍຫາຍລວມກັນ ແມ່ນ ການປະເມີນຄວາມເສຍຫາຍຂອງການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ເຂົ້າມາໃນ ສປປ ລາວ ຈາກຫຼາຍປະເທດໃນໄລຍະເວລາດຽວກັນ.

ຄະນະສືບຫາຂໍ້ມູນ ສາມາດປະເມີນຄວາມເສຍຫາຍລວມກັນໄດ້ ຖ້າການນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ຈາກແຕ່ລະປະເທດ ຫາກມີເງື່ອນໄຂ ດັ່ງນີ້:

1. ອັດຕາການທຸ່ມຕະຫຼາດ ຫຼາຍກວ່າ ສອງສ່ວນຮ້ອຍ ຂອງລາຄາສົ່ງອອກ;
2. ປະລິມານການນຳເຂົ້າສິນຄ້າທີ່ມີການທຸ່ມຕະຫຼາດ ຫຼາຍກວ່າ ສາມສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທີ່ຄ້າຍຄືກັນເຂົ້າມາໃນ ສປປ ລາວ ຫຼື ປະລິມານການນຳເຂົ້າສິນຄ້າທີ່ມີການທຸ່ມຕະຫຼາດ ຈາກແຕ່ລະປະເທດລວມກັນ ຫຼາຍກວ່າ ເຈັດສ່ວນຮ້ອຍ ຂອງປະລິມານການນຳເຂົ້າສິນຄ້າທີ່ຄ້າຍຄືກັນທັງໝົດ;
3. ປະລິມານການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຫຼາຍກວ່າ ໜຶ່ງສ່ວນຮ້ອຍ ຂອງມູນຄ່າສິນຄ້າທີ່ມີແຫຼ່ງກຳເນີດຈາກປະເທດພັດທະນາແລ້ວ ຫຼື ຫຼາຍກວ່າ ສອງສ່ວນຮ້ອຍ ຂອງມູນຄ່າສິນຄ້າທີ່ມີແຫຼ່ງກຳເນີດຈາກປະເທດກຳລັງພັດທະນາ ທີ່ເປັນສະມາຊິກຂອງອົງການການຄ້າໂລກ;
4. ປະລິມານການນຳເຂົ້າສິນຄ້າທີ່ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ທີ່ມີແຫຼ່ງກຳເນີດຈາກປະເທດກຳລັງພັດທະນາ ທີ່ເປັນສະມາຊິກຂອງອົງການການຄ້າໂລກ ຫຼາຍກວ່າ ສີ່ສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທີ່ຄ້າຍຄືກັນ ຫຼື ປະລິມານຂອງສິນຄ້ານຳເຂົ້າທີ່ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຈາກແຕ່ລະປະເທດລວມກັນ ຫຼາຍກວ່າ ເກົ້າສ່ວນຮ້ອຍ ຂອງປະລິມານການນຳເຂົ້າສິນຄ້າທີ່ຄ້າຍຄືກັນທັງໝົດ;
5. ສະພາບການແຂ່ງຂັນ ລະຫວ່າງສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບສິນຄ້າທີ່ຄ້າຍຄືກັນທີ່ຜະລິດພາຍໃນ ສປປ ລາວ.

## ພາກທີ IV
## ການສືບຫາຂໍ້ມູນ ແລະ ເຈົ້າໜ້າທີ່ສືບຫາຂໍ້ມູນ
## ໝວດທີ 1
## ການສືບຫາຂໍ້ມູນ

### ມາດຕາ 23 ການສືບຫາຂໍ້ມູນ

ການສືບຫາຂໍ້ມູນ ແມ່ນ ການຊອກຫາຂໍ້ມູນ ເພື່ອພິສູດຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນທີ່ເກີດຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ.

ການສືບຫາຂໍ້ມູນ ຈະດຳເນີນໄດ້ກໍຕໍ່ເມື່ອມີສາເຫດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

ກະຊວງອຸດສາຫະກຳ ແລະ ການຄ້າ ດຳເນີນການສືບຫາຂໍ້ມູນ ໂດຍມີການປະສານສົມທົບກັບ ກະຊວງ, ອົງການອື່ນທີ່ກ່ຽວຂ້ອງ ກ່ອນນຳສະເໜີລັດຖະບານ ພິຈາລະນານຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້.

**ມາດຕາ 24 ສາເຫດທີ່ພາໃຫ້ມີການສືບຫາຂໍ້ມູນ**

ສາເຫດທີ່ພາໃຫ້ມີການສືບຫາຂໍ້ມູນ ມີ ດັ່ງນີ້:

1. ມີການພົບເຫັນຂໍ້ມູນ ຫຼື ຫຼັກຖານ ກ່ຽວກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ໂດຍເຈົ້າໜ້າທີ່ສືບຫາຂໍ້ມູນ;

2. ມີຄຳຮ້ອງຂອງຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ.

**ມາດຕາ 25 ການພົບເຫັນຂໍ້ມູນ ຫຼື ຫຼັກຖານໂດຍເຈົ້າໜ້າທີ່ສືບຫາຂໍ້ມູນ**

ເມື່ອເຈົ້າໜ້າທີ່ສືບຫາຂໍ້ມູນ ຫາກພົບເຫັນຂໍ້ມູນຫຼັກຖານ ທີ່ຢັ້ງຢືນວ່າມີຄວາມກ່ຽວພັນລະຫວ່າງ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ຕ້ອງລາຍງານຕໍ່ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງ ໃຫ້ດຳເນີນການສືບຫາຂໍ້ມູນ.

**ມາດຕາ 26 ຄຳຮ້ອງຂອງຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ**

ຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ ສາມາດຍື່ນຄຳຮ້ອງຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມແບບພິມ ເພື່ອໃຫ້ດຳເນີນການສືບຫາຂໍ້ມູນຄວາມເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18, 19 ແລະ 20 ຂອງກົດໝາຍສະບັບນີ້.

ຄຳຮ້ອງ ຕ້ອງປະກອບດ້ວຍເອກະສານທີ່ມີຂໍ້ມູນຄົບຖ້ວນ ດັ່ງນີ້:

1. ຂໍ້ມູນທົ່ວໄປຂອງຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ ພ້ອມດ້ວຍລາຍຊື່ຜູ້ຜະລິດສິນຄ້າທີ່ຄ້າຍຄືກັນພາຍໃນທັງໝົດ ທີ່ໃຫ້ການສະໜັບສະໜູນ;
2. ລາຍລະອຽດຂອງສິນຄ້າທີ່ຄ້າຍຄືກັນທີ່ຜະລິດພາຍໃນ ແລະ ສິນຄ້າທີ່ຖືກພິຈາລະນາ;
3. ຂໍ້ມູນກ່ຽວກັບຜູ້ຜະລິດ, ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າ ສິນຄ້າທີ່ຖືກພິຈາລະນາ;
4. ລາຄາປົກກະຕິ, ລາຄາສົ່ງອອກ ແລະ ອັດຕາການທຸ່ມຕະຫຼາດ;
5. ຮູບແບບ, ໄລຍະເວລາ ແລະ ປະລິມານການຊ່ວຍໜູນຂອງປະເທດຜູ້ສົ່ງອອກ;
6. ການປະເມີນຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ;
7. ຄວາມກ່ຽວພັນລະຫວ່າງ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ.

ໃນກໍລະນີ ຜູ້ຜະລິດສິນຄ້າທີ່ຄ້າຍຄືກັນ ເປັນຜູ້ນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ແລະ ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຫຼື ມີຄວາມກ່ຽວຂ້ອງກັບ ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກສິນຄ້າ ທີ່ມີການທຸ່ມຕະຫຼາດ ແລະ ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກນັ້ນ ຈະບໍ່ຖືວ່າຜູ້ຜະລິດສິນຄ້າດັ່ງກ່າວ ເປັນຜູ້ຜະລິດສິນຄ້າພາຍໃນ.

**ມາດຕາ 27 ການພິຈາລະນາຄຳຮ້ອງ**

ພາຍຫຼັງໄດ້ຮັບຄຳຮ້ອງ ເຈົ້າໜ້າທີ່ສືບຫາຂໍ້ມູນ ພິຈາລະນາຂໍ້ມູນ ຫຼື ຫຼັກຖານພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຄົບຖ້ວນເປັນຕົ້ນໄປ, ຖ້າຫາກບໍ່ສາມາດສຳເລັດໄດ້ພາຍໃນກຳນົດເວລາດັ່ງກ່າວ ເຈົ້າໜ້າທີ່ສືບຫາຂໍ້ມູນ ສາມາດສະເໜີ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຕໍ່ເວລາ ແຕ່ສູງສຸດບໍ່ເກີນ ສາມສິບວັນ.

ໃນການພິຈາລະນາຄຳຮ້ອງ ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງກວດກາ ແລະ ຢັ້ງຢືນໄດ້ວ່າປະລິມານການຜະລິດຂອງຜູ້ຍື່ນຄຳຮ້ອງ ແລະ ຜູ້ສະໜັບສະໜູນໃຫ້ດຳເນີນການສືບຫາຂໍ້ມູນ ຫຼາຍກວ່າ ຫ້າສິບສ່ວນຮ້ອຍ ຂອງປະລິມານການຜະລິດສິນຄ້າຂອງພວກກ່ຽວ ແລະ ຜູ້ຄັດຄ້ານ ລວມກັນ, ໃນນັ້ນ ປະລິມານການຜະລິດລວມກັນຂອງຜູ້ຍື່ນຄຳຮ້ອງ ແລະ ຜູ້ສະໜັບສະໜູນໃຫ້ດຳເນີນການສືບຫາຂໍ້ມູນ ຕ້ອງຫຼາຍກວ່າ ຊາວຫ້າສ່ວນຮ້ອຍ ຂອງປະລິມານການຜະລິດສິນຄ້າຂອງຜູ້ຍື່ນຄຳຮ້ອງ, ຜູ້ສະໜັບສະໜູນ, ຜູ້ຄັດຄ້ານ ແລະ ຜູ້ບໍ່ອອກສຽງ ລວມກັນ.

ຫຼັງຈາກພິຈາລະນາ, ຄົ້ນຄວ້າ ແລະ ວິເຄາະວິໄຈຄຳຮ້ອງແລ້ວ ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງປະຕິບັດ ດັ່ງນີ້:

1. ໃນກໍລະນີ ບໍ່ພົບເຫັນຂໍ້ມູນຫຼັກຖານ ທີ່ຊີ້ໃຫ້ເຫັນຄວາມກ່ຽວພັນລະຫວ່າງ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ, ເຈົ້າໜ້າທີ່ສືບຫາຂໍ້ມູນ ລາຍງານຕໍ່ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຊາບ ແລະ ແຈ້ງໃຫ້ຜູ້ຍື່ນຄຳຮ້ອງກ່ຽວກັບຜົນການວິໄຈຂໍ້ມູນດັ່ງກ່າວ;

2. ໃນກໍລະນີ ພົບເຫັນຂໍ້ມູນຫຼັກຖານ ທີ່ຢັ້ງຢືນວ່າມີຄວາມກ່ຽວພັນລະຫວ່າງ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ, ເຈົ້າໜ້າທີ່ສືບຫາຂໍ້ມູນ ລາຍງານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງ ໃຫ້ດຳເນີນການສືບຫາຂໍ້ມູນ. ສຳລັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຕ້ອງໄດ້ແຈ້ງໃຫ້ລັດຖະບານຂອງປະເທດຜູ້ສົ່ງອອກ ເພື່ອປຶກສາຫາລືກ່ອນດຳເນີນການສືບຫາຂໍ້ມູນ.

### ມາດຕາ 28 ຂັ້ນຕອນການດຳເນີນການສືບຫາຂໍ້ມູນ

ການດຳເນີນການສືບຫາຂໍ້ມູນ ໃຫ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ອອກຂໍ້ຕົກລົງໃຫ້ດຳເນີນການສືບຫາຂໍ້ມູນ;
2. ດຳເນີນການສືບຫາຂໍ້ມູນ;
3. ສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ.

### ມາດຕາ 29 ການອອກຂໍ້ຕົກລົງໃຫ້ດຳເນີນການສືບຫາຂໍ້ມູນ

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາອອກຂໍ້ຕົກລົງ ໃຫ້ດຳເນີນການສືບຫາຂໍ້ມູນ ພ້ອມທັງແຕ່ງຕັ້ງຄະນະສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ພາຍຫຼັງໄດ້ຮັບບົດລາຍງານຈາກເຈົ້າໜ້າທີ່ສືບຫາຂໍ້ມູນ.

ຂໍ້ຕົກລົງດຳເນີນການສືບຫາຂໍ້ມູນ ຕ້ອງປະກອບດ້ວຍຂໍ້ມູນຕົ້ນຕໍ ດັ່ງນີ້:

1. ປະເທດຜູ້ສົ່ງອອກ ແລະ ປະເພດສິນຄ້າທີ່ຖືກພິຈາລະນາ;
2. ວັນທີການດຳເນີນສືບຫາຂໍ້ມູນ;
3. ຂໍ້ມູນພື້ນຖານກ່ຽວກັບ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;
4. ກຳນົດເວລາໃນການສະເໜີຄຳເຫັນ ສຳລັບຜູ້ມີສ່ວນກ່ຽວຂ້ອງ;
5. ຂໍ້ມູນຕິດຕໍ່ຂອງເຈົ້າໜ້າທີ່ສືບຫາຂໍ້ມູນ.

ຄະນະສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ປະກອບດ້ວຍ ເຈົ້າໜ້າທີ່ສືບຫາຂໍ້ມູນ, ພະນັກງານຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຜູ້ຕາງໜ້າຈາກພາກສ່ວນອື່ນທີ່ກ່ຽວຂ້ອງ.

## ມາດຕາ 30 ການດຳເນີນການສືບຫາຂໍ້ມູນ

ພາຍຫຼັງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງໃຫ້ດຳເນີນການສືບຫາຂໍ້ມູນ, ຄະນະສືບຫາຂໍ້ມູນ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງໃຫ້ປະເທດຜູ້ສົ່ງອອກ, ຜູ້ຍື່ນຄຳຮ້ອງ, ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງ ຊາບ;
2. ເຜີຍແຜ່ຂໍ້ຕົກລົງໃຫ້ດຳເນີນການສືບຫາຂໍ້ມູນໃນສື່ໃດໜຶ່ງ ເພື່ອໃຫ້ສັງຄົມຊາບ;
3. ສົ່ງແບບສອບຖາມໃຫ້ແກ່ ຜູ້ຜະລິດສິນຄ້າພາຍໃນ ແລະ ຜູ້ຜະລິດ ຫຼື ຜູ້ສົ່ງອອກ ສິນຄ້າທີ່ຖືກພິຈາລະນາ ເພື່ອສະໜອງຂໍ້ມູນ;
4. ວິເຄາະຂໍ້ມູນທີ່ໄດ້ຮັບຈາກແບບສອບຖາມ ຫຼື ຂໍຂໍ້ມູນເພີ່ມເຕີມ ໃນກໍລະນີຈຳເປັນ;
5. ແຈ້ງໃຫ້ຜູ້ມີສ່ວນກ່ຽວຂ້ອງຊາບ ກ່ຽວກັບຜົນການສືບຫາຂໍ້ມູນເບື້ອງຕົ້ນ ເພື່ອປະກອບຄຳເຫັນ;
6. ເກັບກຳ ແລະ ວິເຄາະຂໍ້ມູນເພີ່ມເຕີມໃນປະເທດຜູ້ສົ່ງອອກ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ຄວາມເປັນຈິງ ກ່ຽວກັບຜົນກະທົບຈາກ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;
7. ແຈ້ງໃຫ້ຜູ້ມີສ່ວນກ່ຽວຂ້ອງຊາບ ກ່ຽວກັບຂໍ້ມູນຫຼັກຖານຕົວຈິງ ທີ່ໃຊ້ເປັນພື້ນຖານໃນການພິຈາລະນາການສືບຫາຂໍ້ມູນຂັ້ນສຸດທ້າຍ ເພື່ອປະກອບຄຳເຫັນ.

ໃນກໍລະນີທີ່ ຜູ້ສົ່ງອອກ, ຜູ້ຜະລິດ, ຜູ້ນຳເຂົ້າ ຫຼື ປະເພດສິນຄ້າທີ່ຖືກພິຈາລະນາ ມີຈຳນວນຫຼາຍ ຄະນະສືບຫາຂໍ້ມູນ ສາມາດຄັດເລືອກເອົາ ຜູ້ສົ່ງອອກ, ຜູ້ຜະລິດ ຫຼື ປະເພດສິນຄ້າ ອີງຕາມຂໍ້ມູນສະຖິຕິທີ່ເໝາະສົມ.

## ມາດຕາ 31 ການສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ

ພາຍຫຼັງໄດ້ສຳເລັດການສືບຫາຂໍ້ມູນ ຄະນະສືບຫາຂໍ້ມູນ ຕ້ອງສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ ພ້ອມດ້ວຍຂໍ້ມູນຫຼັກຖານທັງໝົດທີ່ເກັບກຳໄດ້ຕໍ່ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອນຳສະເໜີ ລັດຖະບານ ພິຈາລະນາຕົກລົງນຳໃຊ້ ຫຼື ບໍ່ນຳໃຊ້ມາດຕະການຕອບໂຕ້ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ.

## ມາດຕາ 32 ໄລຍະເວລາການສືບຫາຂໍ້ມູນ

ການສືບຫາຂໍ້ມູນ ຕ້ອງສຳເລັດພາຍໃນເວລາ ໜຶ່ງປີ ນັບແຕ່ວັນໄດ້ອອກຂໍ້ຕົກລົງ ເປັນຕົ້ນໄປ. ຖ້າຫາກບໍ່ສາມາດສຳເລັດພາຍໃນກຳນົດເວລາດັ່ງກ່າວ ຄະນະສືບຫາຂໍ້ມູນ ສາມາດສະເໜີ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຕໍ່ເວລາ ແຕ່ສູງສຸດບໍ່ໃຫ້ເກີນ ຫົກເດືອນ.

## ມາດຕາ 33 ການຍົກເລີກການດຳເນີນການສືບຫາຂໍ້ມູນ

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງຍົກເລີກການດຳເນີນການສືບຫາຂໍ້ມູນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍຖອນຄຳຮ້ອງຂອງຕົນ;
2. ບໍ່ມີຂໍ້ມູນຫຼັກຖານຕົວຈິງ ທີ່ພິສູດວ່າມີຄວາມກ່ຽວພັນລະຫວ່າງ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ;
3. ຜົນການສືບຫາຂໍ້ມູນ ເຫັນວ່າບໍ່ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້;
4. ເຫດຜົນອື່ນ ຕາມການຕົກລົງຂອງລັດຖະບານ.

ພາຍຫຼັງອອກຂໍ້ຕົກລົງຍົກເລີກການດໍາເນີນການສືບຫາຂໍ້ມູນ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງ ແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງ ພ້ອມທັງເຜີຍແຜ່ໃຫ້ສັງຄົມຊາບ.

**ມາດຕາ 34 ການຮັກສາຂໍ້ມູນທີ່ເປັນຄວາມລັບ**

ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ຕ້ອງເກັບຮັກສາຂໍ້ມູນທີ່ເປັນຄວາມລັບ ຫຼື ຂໍ້ມູນທີ່ຜູ້ສະໜອງ ສະເໜີໃຫ້ເປັນຄວາມລັບ ແລະ ບໍ່ສາມາດເປີດເຜີຍຕໍ່ສັງຄົມໄດ້ ຖ້າບໍ່ໄດ້ຮັບອະນຸຍາດຈາກຜູ້ສະໜອງຂໍ້ມູນ.

ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ອາດຮຽກຮ້ອງໃຫ້ຜູ້ສະໜອງຂໍ້ມູນ ສະຫຼຸບຫຍໍ້ກ່ຽວກັບຂໍ້ມູນທີ່ ສາມາດເປີດເຜີຍໄດ້, ຖ້າຜູ້ສະໜອງ ບໍ່ສາມາດສະຫຼຸບຫຍໍ້ໄດ້ ກໍຕ້ອງໃຫ້ເຫດຜົນ.

ຖ້າເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ຫາກເຫັນວ່າການຮ້ອງຂໍໃຫ້ຮັກສາຂໍ້ມູນເປັນຄວາມລັບນັ້ນ ບໍ່ມີ ເຫດຜົນພຽງພໍ ແລະ ຜູ້ສະໜອງຂໍ້ມູນ ບໍ່ເຫັນດີໃຫ້ເປີດເຜີຍຕໍ່ສັງຄົມ ຫຼື ບໍ່ສາມາດສັງລວມຫຍໍ້ ໂດຍບໍ່ມີເຫດ ຜົນພຽງພໍ ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ຈະບໍ່ນໍາເອົາຂໍ້ມູນນັ້ນມາປະກອບການພິຈາລະນາ ເວັ້ນເສຍແຕ່ ຈະມີການພິສູດຈາກແຫຼ່ງຂໍ້ມູນອື່ນວ່າ ຂໍ້ມູນນັ້ນເປັນຂໍ້ມູນທີ່ຖືກຕ້ອງ.

**ມາດຕາ 35 ງົບປະມານໃຊ້ຈ່າຍໃນການດໍາເນີນການສືບຫາຂໍ້ມູນ**

ງົບປະມານໃຊ້ຈ່າຍໃນການດໍາເນີນການສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ໃຫ້ນໍາໃຊ້ງົບປະມານຂອງລັດ.

## ໝວດທີ 2
## ເຈົ້າໜ້າທີ່ສືບຫາຂໍ້ມູນ

**ມາດຕາ 36 ເຈົ້າໜ້າທີ່ສືບຫາຂໍ້ມູນ**

ເຈົ້າໜ້າທີ່ສືບຫາຂໍ້ມູນ ແມ່ນ ພະນັກງານ-ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງ ອຸດສາຫະກໍາ ແລະ ການຄ້າ ເພື່ອຮັບຜິດຊອບວຽກງານສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ່ມຕະ ຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 37 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບຫາຂໍ້ມູນ**

ເຈົ້າໜ້າທີ່ສືບຫາຂໍ້ມູນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາຄໍາຮ້ອງຂອງ ຜູ້ຜະລິດພາຍໃນ ຫຼື ຕາງໜ້າຜູ້ຜະລິດພາຍໃນ ແລະ ລາຍງານຕໍ່ ລັດຖະ ມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ;
2. ສືບຖາມ, ຮຽກເອົາຂໍ້ມູນຈາກ ຜູ້ຮ້ອງຂໍ, ຜູ້ສົ່ງອອກ, ຜູ້ນໍາເຂົ້າ ແລະ ຜູ້ຜະລິດສິນຄ້າພາຍໃນ ກ່ຽວກັບຄວາມເສຍຫາຍຈາກ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;
3. ເກັບກໍາ ແລະ ວິເຄາະຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;
4. ຄົ້ນຄວ້າ ກໍານົດລາຄາປົກກະຕິ ແລະ ລາຄາສົ່ງອອກ ທີ່ສົມເຫດສົມຜົນແລ້ວ ນໍາສະເໜີຕໍ່ ຄະນະ ສືບຫາຂໍ້ມູນ;
5. ສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກຕໍ່ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາ;

6. ຄົ້ນຄວ້າ ແລະ ສະເໜີ ກ່ຽວກັບການຍົກເລີກ ຫຼື ຕໍ່ໄລຍະເວລາການນຳໃຊ້ມາດຕະການຕອບໂຕ້ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ມາດຕະການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ

### ໝວດທີ 1
### ປະເພດມາດຕະການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ

**ມາດຕາ 38 ປະເພດມາດຕະການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ**

ມາດຕະການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ມີ ສອງປະເພດ ດັ່ງນີ້:

1. ມາດຕະການຊົ່ວຄາວ;
2. ມາດຕະການທົ່ວໄປ.

**ມາດຕາ 39 ມາດຕະການຊົ່ວຄາວ**

ມາດຕະການຊົ່ວຄາວ ແມ່ນ ມາດຕະການທີ່ນຳໃຊ້ຕໍ່ຜູ້ນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ໃນໄລຍະດຳເນີນການສືບຫາຂໍ້ມູນ ໂດຍໃຫ້ວາງເງິນຄໍ້າປະກັນ.

**ມາດຕາ 40 ມາດຕະການທົ່ວໄປ**

ມາດຕະການທົ່ວໄປ ແມ່ນ ມາດຕະການທີ່ນຳໃຊ້ຕໍ່ຜູ້ນຳເຂົ້າສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ພາຍຫຼັງສຳເລັດການສືບຫາຂໍ້ມູນ ທີ່ເຫັນວ່າມີຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18, 19 ແລະ 20 ຂອງກົດໝາຍສະບັບນີ້ ດ້ວຍການເພີ່ມອັດຕາພາສີສິນຄ້ານຳເຂົ້າ.

### ໝວດທີ 2
### ການນຳໃຊ້ມາດຕະການຊົ່ວຄາວ

**ມາດຕາ 41 ການນຳໃຊ້ມາດຕະການຊົ່ວຄາວ**

ມາດຕະການຊົ່ວຄາວ ສາມາດນຳໃຊ້ພາຍຫຼັງ ສອງເດືອນ ນັບແຕ່ວັນ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງໃຫ້ດຳເນີນການສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ເປັນຕົ້ນໄປ.

ໃນໄລຍະດຳເນີນການສືບຫາຂໍ້ມູນ ແລະ ມີການສືບຫາຂໍ້ມູນເບື້ອງຕົ້ນ ຫາກເຫັນວ່າມີການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ທີ່ໄດ້ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ແລະ ເຫັນວ່າ

ມີຄວາມຈຳເປັນຕ້ອງໄດ້ນຳໃຊ້ມາດຕະການຊົ່ວຄາວ ເພື່ອປ້ອງກັນຄວາມເສຍຫາຍໃນລະຫວ່າງການສືບຫາຂໍ້ມູນ ຄະນະສືບຫາຂໍ້ມູນ ຕ້ອງລາຍງານຕໍ່ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໂດຍທັນທີ ເພື່ອສະເໜີ ລັດຖະບານ ພິຈາລະນານຳໃຊ້ມາດຕະການຊົ່ວຄາວ.

ພາຍຫຼັງ ລັດຖະບານ ໄດ້ຕົກລົງນຳໃຊ້ມາດຕະການຊົ່ວຄາວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຊາບ. ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຈັດຕັ້ງປະຕິບັດມາດຕະການດັ່ງກ່າວ.

ການກຳນົດຈຳນວນເງິນຄ້ຳປະກັນນັ້ນ ຕ້ອງໃຫ້ເທົ່າກັບ ຫຼື ຕ່ຳກວ່າ ອັດຕາການທຸ່ມຕະຫຼາດ ຫຼື ປະລິມານການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ທີ່ກຳນົດໄວ້ໃນຜົນການສືບຫາຂໍ້ມູນເບື້ອງຕົ້ນ.

ກ່ອນນຳໃຊ້ມາດຕະການຊົ່ວຄາວ ຖ້າຜູ້ສົ່ງອອກຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44, 45 ແລະ 46 ຂອງກົດໝາຍສະບັບນີ້.

### ມາດຕາ 42 ກຳນົດເວລາການນຳໃຊ້ມາດຕະການຊົ່ວຄາວ

ກຳນົດເວລາການນຳໃຊ້ມາດຕະການຊົ່ວຄາວ ສຳລັບການທຸ່ມຕະຫຼາດ ມີ ດັ່ງນີ້:

1. ກໍລະນີວາງເງິນຄ້ຳປະກັນ ເທົ່າກັບ ອັດຕາການທຸ່ມຕະຫຼາດ ແມ່ນ ສາມາດນຳໃຊ້ມາດຕະການຊົ່ວຄາວ ສູງສຸດບໍ່ເກີນ ສີ່ເດືອນ ນັບແຕ່ວັນໄດ້ຕົກລົງນຳໃຊ້ມາດຕະການ. ໃນກໍລະນີມີຄຳຮ້ອງຂໍ ຈາກຜູ້ສົ່ງອອກທີ່ມີອັດຕາສ່ວນການຄ້າກວມເອົາສ່ວນຫຼາຍ ໃຫ້ຄະນະສືບຫາຂໍ້ມູນ ລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະເໜີລັດຖະບານພິຈາລະນາຕໍ່ເວລາ ແຕ່ສູງສຸດບໍ່ໃຫ້ເກີນ ສອງເດືອນ ລວມທັງໝົດບໍ່ໃຫ້ເກີນ ຫົກເດືອນ;
2. ກໍລະນີວາງເງິນຄ້ຳປະກັນ ຫາກຕ່ຳກວ່າ ອັດຕາການທຸ່ມຕະຫຼາດ ແຕ່ພຽງພໍໃນການແກ້ໄຂຄວາມເສຍຫາຍທີ່ເກີດຂຶ້ນ ໃຫ້ນຳໃຊ້ມາດຕະການຊົ່ວຄາວ ບໍ່ເກີນ ຫົກເດືອນ ນັບແຕ່ວັນໄດ້ຕົກລົງນຳໃຊ້ມາດຕະການ. ໃນກໍລະນີມີຄຳຮ້ອງຂໍຈາກຜູ້ສົ່ງອອກທີ່ມີອັດຕາສ່ວນການຄ້າກວມເອົາສ່ວນຫຼາຍ ໃຫ້ຄະນະສືບຫາຂໍ້ມູນ ລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະເໜີລັດຖະບານ ພິຈາລະນາຕໍ່ເວລາແຕ່ສູງສຸດບໍ່ເກີນ ສາມເດືອນ ແຕ່ລວມທັງໝົດບໍ່ໃຫ້ເກີນ ເກົ້າເດືອນ.

ກຳນົດເວລາການນຳໃຊ້ມາດຕະການຊົ່ວຄາວ ສຳລັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຕ້ອງບໍ່ໃຫ້ເກີນ ສີ່ເດືອນ ນັບແຕ່ວັນໄດ້ຕົກລົງນຳໃຊ້ມາດຕະການເປັນຕົ້ນໄປ.

### ມາດຕາ 43 ການຍົກເລີກມາດຕະການຊົ່ວຄາວ

ລັດຖະບານ ພິຈາລະນາຍົກເລີກມາດຕະການຊົ່ວຄາວ ຕາມການສະເໜີຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ພາຍຫຼັງການສືບຫາຂໍ້ມູນ ຫາກເຫັນວ່າການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ບໍ່ໄດ້ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ.

ພາຍຫຼັງ ລັດຖະບານ ໄດ້ຕົກລົງຍົກເລີກການນຳໃຊ້ມາດຕະການຊົ່ວຄາວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຊາບ. ກະຊວງການເງິນ ຕ້ອງສົ່ງເງິນຄ້ຳປະກັນຄືນໃຫ້ຜູ້ນຳເຂົ້າສິນຄ້າ ຕາມກົດໝາຍ.

### ມາດຕາ 44 ການຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ

ການຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ແມ່ນ ການຕົກລົງ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ກັບຜູ້ສົ່ງອອກ ພາຍຫຼັງດຳເນີນການສືບຫາຂໍ້ມູນ ແລະ ພົບເຫັນ

ຄວາມເສຍຫາຍທີ່ເກີດຂຶ້ນ ແຕ່ຍັງບໍ່ທັນໄດ້ຕົກລົງນຳໃຊ້ມາດຕະການຊົ່ວຄາວ ຊຶ່ງຜູ້ສົ່ງອອກ ຍິນຍອມຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ເພື່ອບໍ່ໃຫ້ນຳໃຊ້ມາດຕະການຕອບໂຕ້.

ການຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ໃຫ້ປະຕິບັດ ດັ່ງນີ້:

1. ກະຊວງອຸດສາຫະກຳ ແລະ ການຄ້າ ເຮັດສັນຍາກັບຜູ້ສົ່ງອອກ ໂດຍຜູ້ສົ່ງອອກ ເຫັນດີປັບລາຄາຂອງສິນຄ້າທີ່ມີການທຸ່ມຕະຫຼາດໃຫ້ສູງຂຶ້ນ ຫຼື ຍົກເລີກການສົ່ງອອກສິນຄ້າໃນລາຄາທຸ່ມຕະຫຼາດ;

2. ກະຊວງອຸດສາຫະກຳ ແລະ ການຄ້າ ເຮັດສັນຍາກັບຜູ້ສົ່ງອອກ ໂດຍຜູ້ສົ່ງອອກ ເຫັນດີປັບລາຄາຂອງສິນຄ້າທີ່ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ໃຫ້ສູງຂຶ້ນ ຫຼື ລັດຖະບານຂອງປະເທດຜູ້ສົ່ງອອກສິນຄ້າທີ່ໄດ້ຮັບການຊ່ວຍໜູນເຫັນດີລົບລ້າງ, ຈຳກັດການຊ່ວຍໜູນສິນຄ້າສົ່ງອອກ ຫຼື ນຳໃຊ້ມາດຕະການອື່ນເພື່ອແກ້ໄຂຜົນກະທົບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ.

ການຕົກລົງ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ແມ່ນ ເພື່ອຈຸດປະສົງທົດແທນຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ເທົ່ານັ້ນ ແລະ ຕ້ອງບໍ່ກຳນົດໃຫ້ມີການປັບລາຄາສູງກວ່າ ອັດຕາການທຸ່ມຕະຫຼາດ ຫຼື ປະລິມານການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ.

**ມາດຕາ 45 ການສະເໜີເຮັດສັນຍາ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ**

ກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ຜູ້ສົ່ງອອກ ສາມາດສະເໜີເຮັດສັນຍາ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ.

ກະຊວງອຸດສາຫະກຳ ແລະ ການຄ້າ ສາມາດປະຕິເສດ ການສະເໜີເຮັດສັນຍາຂອງຜູ້ສົ່ງອອກ ຖ້າເຫັນວ່າການສະເໜີດັ່ງກ່າວ ຫາກມີຄວາມຫຍຸ້ງຍາກໃນການປະຕິບັດ ແລະ ຕ້ອງແຈ້ງເຫດຜົນຂອງການປະຕິເສດນັ້ນໃຫ້ຜູ້ສົ່ງອອກຊາບ. ໃນກໍລະນີຜູ້ສົ່ງອອກ ຫາກປະຕິເສດ ຫຼື ບໍ່ຍອມຮັບການສະເໜີການເຮັດສັນຍາດັ່ງກ່າວ ກະຊວງອຸດສາຫະກຳ ແລະ ການຄ້າ ກໍຕ້ອງນຳມາພິຈາລະນາຢ່າງສົມເຫດສົມຜົນ ໂດຍບໍ່ໃຫ້ຜູ້ສົ່ງອອກເສຍຜົນປະໂຫຍດ.

**ມາດຕາ 46 ການຈັດຕັ້ງປະຕິບັດສັນຍາ ຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ**

ຜູ້ສົ່ງອອກທີ່ໄດ້ເຮັດສັນຍາກັບ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງສະໜອງຂໍ້ມູນໃນການຈັດຕັ້ງປະຕິບັດສັນຍາຕາມໄລຍະເວລາທີ່ກຳນົດ ແລະ ຕ້ອງໃຫ້ຄະນະສືບຫາຂໍ້ມູນ ກວດກາຄວາມເປັນຈິງຂອງຂໍ້ມູນນັ້ນ. ຖ້າຫາກມີການລະເມີດສັນຍາ ຄະນະສືບຫາຂໍ້ມູນ ຕ້ອງນຳໃຊ້ຂໍ້ມູນທີ່ມີຢູ່ ເປັນພື້ນຖານໃນການກຳນົດມາດຕະການຊົ່ວຄາວ ແລະ ລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະເໜີລັດຖະບານພິຈາລະນາຕົກລົງນຳໃຊ້ມາດຕະການດັ່ງກ່າວ ແລະ ດຳເນີນຂະບວນການສືບຫາຂໍ້ມູນຕໍ່ໄປ.

ພາຍຫຼັງໄດ້ເຮັດສັນຍາຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ, ຄະນະສືບຫາຂໍ້ມູນ ສາມາດສືບຕໍ່ດຳເນີນການສືບຫາຂໍ້ມູນຕາມການຮ້ອງຂໍຂອງຜູ້ສົ່ງອອກ ຫຼື ເມື່ອມີການລະເມີດສັນຍາ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ຫຼື ເຫັນສົມຄວນ. ເມື່ອສິ້ນສຸດການດຳເນີນການສືບຫາຂໍ້ມູນ ຄະນະສືບຫາຂໍ້ມູນ ມີຄຳເຫັນຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ມີການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ຫຼື ບໍ່ມີຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ, ຄະນະສືບຫາຂໍ້ມູນ ຕ້ອງລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຍົກເລີກ ສັນຍາຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;

2. ມີການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ແລະ ມີຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ ໃຫ້ສືບຕໍ່ປະຕິບັດຕາມສັນຍາຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;

3. ມີການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ແລະ ມີຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນຈາກການລະເມີດສັນຍາ, ຄະນະສືບຫາຂໍ້ມູນ ຕ້ອງລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອລາຍງານລັດຖະບານພິຈາລະນາເກັບຄ່າພາສີຍ້ອນຫຼັງ ສາມເດືອນ ກ່ອນວັນໄດ້ຕົກລົງນຳໃຊ້ມາດຕະການຊົ່ວຄາວ ຕາມອັດຕາທີ່ໄດ້ກຳນົດໃນຜົນການສືບຫາຂໍ້ມູນ.

## ໝວດທີ 3
## ການນຳໃຊ້ມາດຕະການທົ່ວໄປ

### ມາດຕາ 47 ການນຳໃຊ້ມາດຕະການທົ່ວໄປ

ພາຍຫຼັງສຳເລັດການສືບຫາຂໍ້ມູນ ແລະ ຜົນການສືບຫາຂໍ້ມູນບົ່ງບອກວ່າ ມີການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ແລະ ໄດ້ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ, ຄະນະສືບຫາຂໍ້ມູນ ຕ້ອງລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະເໜີລັດຖະບານພິຈາລະນານຳໃຊ້ມາດຕະການທົ່ວໄປ.

ພາຍຫຼັງໄດ້ຮັບໜັງສືສະເໜີຈາກກະຊວງອຸດສາຫະກຳ ແລະ ການຄ້າ, ລັດຖະບານ ພິຈາລະນາສະເໜີຕໍ່ສະພາແຫ່ງຊາດ ເພື່ອຮັບຮອງການເພີ່ມອັດຕາພາສີຕາມທີ່ໄດ້ກຳນົດໃນຜົນການສືບຫາຂໍ້ມູນ. ພາຍຫຼັງສະພາແຫ່ງຊາດໄດ້ຮັບຮອງແລ້ວ, ລັດຖະບານ ນຳໄປຈັດຕັ້ງປະຕິບັດພາຍໃນເວລາ ສິບຫ້າວັນ ໂດຍມອບໃຫ້ກະຊວງການເງິນ ເປັນຜູ້ຮັບຜິດຊອບ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງການນຳໃຊ້ມາດຕະການທົ່ວໄປໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຊາບໂດຍໄວ.

ອັດຕາພາສີທີ່ນຳໃຊ້ນັ້ນ ແມ່ນເພື່ອຈຸດປະສົງແກ້ໄຂຄວາມເສຍຫາຍເທົ່ານັ້ນ ແລະ ຕ້ອງໃຫ້ເທົ່າກັບ ຫຼື ຕໍ່າກວ່າ ອັດຕາການທຸ່ມຕະຫຼາດ ຫຼື ປະລິມານການຊ່ວຍໜູນຂອງປະເທດຜູ້ສົ່ງອອກ, ເວັ້ນເສຍແຕ່ເປັນການປະຕິບັດຕາມການຕົກລົງຍົກເລີກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍສະບັບນີ້.

### ມາດຕາ 48 ໄລຍະເວລາການນຳໃຊ້ມາດຕະການທົ່ວໄປ

ມາດຕະການທົ່ວໄປ ສາມາດນຳໃຊ້ໄດ້ຕັ້ງໜຶ່ງສູງສຸດບໍ່ເກີນ ຫ້າປີ ນັບແຕ່ວັນລັດຖະບານ ໄດ້ຕົກລົງນຳໃຊ້ມາດຕະການດັ່ງກ່າວ ແລະ ສາມາດສະເໜີຕໍ່ເວລານຳໃຊ້ ພາຍຫຼັງມີການທົບທວນຄືນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ວັກທີສອງ ຂອງກົດໝາຍສະບັບນີ້ ເມື່ອເຫັນວ່າຜູ້ຜະລິດສິນຄ້າພາຍໃນ ຍັງໄດ້ຮັບຄວາມເສຍຫາຍຈາກການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ.

### ມາດຕາ 49 ການທົບທວນຄືນການນຳໃຊ້ມາດຕະການທົ່ວໄປ

ການທົບທວນຄືນການນຳໃຊ້ມາດຕະການທົ່ວໄປຈະດຳເນີນໄດ້ ກໍຕໍ່ເມື່ອຄະນະສືບຫາຂໍ້ມູນ ເຫັນວ່າ ຄວນໃຫ້ມີການດຳເນີນການທົບທວນຄືນ ຫຼື ໄດ້ຮັບຄຳຮ້ອງຈາກຜູ້ມີສ່ວນກ່ຽວຂ້ອງ ແລະ ຕ້ອງດຳເນີນໃຫ້ສຳເລັດພາຍໃນເວລາ ໜຶ່ງປີ ນັບແຕ່ວັນໄດ້ຕົກລົງໃຫ້ມີການທົບທວນຄືນ.

ການທົບທວນຄືນ ສາມາດດຳເນີນ ໜຶ່ງປີ ກ່ອນໄລຍະເວລາການນຳໃຊ້ມາດຕະການທົ່ວໄປ ຈະສິ້ນສຸດລົງ ຕາມການສະເໜີຂອງຜູ້ມີສ່ວນກ່ຽວຂ້ອງ ເມື່ອເຫັນວ່າ ບໍ່ສືບຕໍ່ນຳໃຊ້ມາດຕະການທົ່ວໄປ ຈະເຮັດໃຫ້ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ສືບຕໍ່ສ້າງຄວາມເສຍຫາຍຕໍ່ຜູ້ຜະລິດສິນຄ້າພາຍໃນ.

ການທົບທວນຄືນ ສາມາດດຳເນີນພາຍຫຼັງ ມີການນຳໃຊ້ມາດຕະການທົ່ວໄປ ໜຶ່ງປີ ໂດຍພິຈາລະນາທົບທວນຄືນ ຍົກເລີກການເກັບ ຫຼື ດັດແກ້ອັດຕາພາສີ ຕາມການສະເໜີຂອງຜູ້ມີສ່ວນກ່ຽວຂ້ອງ ເມື່ອເຫັນວ່າມີຫຼັກຖານພຽງພໍກ່ຽວກັບຄວາມເສຍຫາຍຂອງການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ.

ຄະນະສືບຫາຂໍ້ມູນ ຕ້ອງພິຈາລະນາທົບທວນຄືນການເກັບຄ່າພາສີໂດຍໄວ ສຳລັບຜູ້ສົ່ງອອກ ທີ່ບໍ່ໄດ້ສົ່ງສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ເຂົ້າມາໃນ ສປປ ລາວ ໃນໄລຍະທີ່ມີການສືບຫາຂໍ້ມູນ ຕາມການສະເໜີຂອງຜູ້ຮ້ອງຂໍ ເມື່ອເຫັນວ່າບໍ່ມີຄວາມກ່ຽວຂ້ອງກັບຜູ້ສົ່ງອອກ ທີ່ກຳລັງຖືກນຳໃຊ້ມາດຕະການທົ່ວໄປ ແລະ ໃນໄລຍະການທົບທວນຄືນນັ້ນ ຈະບໍ່ສາມາດເກັບຄ່າພາສີຈາກຜູ້ຮ້ອງຂໍໃຫ້ມີການທົບທວນຄືນ. ພາຍຫຼັງຄະນະສືບຫາຂໍ້ມູນ ມີຄຳເຫັນວ່າ ມີການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ຫຼື ຜູ້ຮ້ອງຂໍ ມີສ່ວນກ່ຽວຂ້ອງກັບ ຜູ້ສົ່ງອອກ ທີ່ກຳລັງຖືກນຳໃຊ້ມາດຕະການທົ່ວໄປ ຄະນະສືບຫາຂໍ້ມູນ ສາມາດກຳນົດອັດຕາພາສີ ແລະ ເກັບຄ່າພາສີ ນັບຕັ້ງແຕ່ວັນໄດ້ດຳເນີນການທົບທວນຄືນ.

### ມາດຕາ 50 ການສົ່ງເງິນຄືນ

ຜູ້ນຳເຂົ້າສິນຄ້າທີ່ຖືກພິຈາລະນາ ສາມາດຮ້ອງຂໍໃຫ້ມີການສົ່ງເງິນຄືນ ຖ້າຫາກພິສູດໄດ້ວ່າ ອັດຕາການທຸ່ມຕະຫຼາດ ຫຼື ປະລິມານການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ໄດ້ຖືກລົບລ້າງ ຫຼື ຫຼຸດລົງຕໍ່າກວ່າອັດຕາພາສີທີ່ກຳນົດໄວ້ ໂດຍຍື່ນຄຳຮ້ອງຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນເວລາ ຫົກເດືອນ ນັບແຕ່ວັນໄດ້ຈ່າຍຄ່າພາສີ. ການສົ່ງເງິນຄືນ ຕ້ອງພິຈາລະນາບໍ່ເກີນ ໜຶ່ງປີ ແລະ ສາມາດຕໍ່ໄດ້ສູງສຸດບໍ່ໃຫ້ເກີນ ຫົກເດືອນ ຫຼັງຈາກວັນໄດ້ຮັບຄຳຮ້ອງ.

ການສົ່ງເງິນຄືນ ຕ້ອງດຳເນີນພາຍໃນເວລາ ສາມເດືອນ ນັບແຕ່ວັນໄດ້ຕົກລົງໃຫ້ມີການສົ່ງເງິນຄືນ. ໃນກໍລະນີບໍ່ສາມາດດຳເນີນພາຍໃນເວລາ ສາມເດືອນ, ຄະນະສືບຫາຂໍ້ມູນ ຕ້ອງໃຫ້ເຫດຜົນແກ່ຜູ້ນຳເຂົ້າສິນຄ້າຮັບຊາບ.

### ມາດຕາ 51 ການເກັບຄ່າພາສີປ້ອນຫຼັງ

ຄະນະສືບຫາຂໍ້ມູນ ສາມາດສະເໜີໃຫ້ເກັບຄ່າພາສີປ້ອນຫຼັງໄດ້ ແຕ່ຕ້ອງບໍ່ໃຫ້ເກີນ ສາມເດືອນ ກ່ອນວັນໄດ້ຕົກລົງນຳໃຊ້ມາດຕະການຊົ່ວຄາວ ຖ້າຫາກມີຂໍ້ມູນ ດັ່ງນີ້:

1. ມີປະຫວັດການທຸ່ມຕະຫຼາດສິນຄ້າປະເພດນັ້ນ ແລະ ມີຄວາມເສຍຫາຍເກີດຂຶ້ນ ຫຼື ຜູ້ນຳເຂົ້າຫາກຮູ້ວ່າຜູ້ສົ່ງອອກ ໄດ້ທຸ່ມຕະຫຼາດ ຊຶ່ງອາດກໍ່ໃຫ້ເກີດຄວາມເສຍຫາຍ;
2. ຄວາມເສຍຫາຍໄດ້ເກີດຂຶ້ນຈາກການນຳເຂົ້າສິນຄ້າທີ່ມີການທຸ່ມຕະຫຼາດ ເປັນຈຳນວນຫຼາຍ ໃນໄລຍະເວລາອັນສັ້ນ ໂດຍໃຫ້ພິຈາລະນາ ປະລິມານຂອງການນຳເຂົ້າສິນຄ້າ ໃນໄລຍະເວລາ ຈາກວັນເລີ່ມດຳເນີນການສືບຫາຂໍ້ມູນຈົນເຖິງວັນໄດ້ຕົກລົງນຳໃຊ້ມາດຕະການຊົ່ວຄາວ ແລະ ປັດໄຈອື່ນທີ່ກ່ຽວຂ້ອງ ເຊັ່ນ ປະລິມານສິນຄ້ານຳເຂົ້າໃນສາງເພີ່ມຂຶ້ນຢ່າງກະທັນຫັນ.

ສຳລັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ໃຫ້ພິຈາລະນາພຽງແຕ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການນຳເຂົ້າສິນຄ້າທີ່ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ເປັນຈຳນວນຫຼາຍ ໃນໄລຍະເວລາອັນສັ້ນ.

ການເກັບຄ່າພາສີປ້ອນຫຼັງ ບໍ່ໃຫ້ນຳໃຊ້ກັບສິນຄ້ານຳເຂົ້າ ກ່ອນວັນເລີ່ມດຳເນີນການສືບຫາຂໍ້ມູນ.

**ມາດຕາ 52 ການຮ້ອງຂໍໃນກໍລະນີບໍ່ພໍໃຈ**

ໃນກໍລະນີທີ່ຜູ້ມີສ່ວນກ່ຽວຂ້ອງຫາກບໍ່ພໍໃຈຕໍ່ການນຳໃຊ້ມາດຕະການທົ່ວໄປ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47, ການທົບທວນຄືນການນຳໃຊ້ມາດຕະການທົ່ວໄປ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ແລະ ການສົ່ງເງິນຄືນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້ ສາມາດຮ້ອງຂໍໃຫ້ສານ ເພື່ອພິຈາລະນາອອກຄຳຕັດສິນ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 53 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕອບໂຕ້ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;
2. ເປັນສື່ກາງໃຫ້ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດຂອງຕົນ, ພັກພວກ, ຈຸ້ມເຊື້ອ ແລະ ການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ;
3. ແຊກແຊງ, ກົດໜ່ວງ ແລະ ຂັດຂວາງການເຮັດວຽກຂອງເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;
4. ປົກປິດ, ເຊື່ອງອຳ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການຕອບໂຕ້ການທຸ່ມຕະຫຼາດ ແລະ ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 54 ຂໍ້ຫ້າມສຳລັບຜູ້ຜະລິດສິນຄ້າພາຍໃນ**

ຫ້າມຜູ້ຜະລິດສິນຄ້າພາຍໃນ ມີພຶດຕິກຳ ດັ່ງນີ້:

1. ໃສ່ຮ້າຍປ້າຍສີ ຜູ້ນຳເຂົ້າສິນຄ້າທີ່ຄ້າຍຄືກັນ, ປອມແປງ, ບິດເບືອນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງໃຫ້ແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;
2. ໃຫ້ສິນບົນແກ່ພະນັກງານ ແລະ ບຸກຄົນທີ່ກ່ຽວຂ້ອງກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 55 ຂໍ້ຫ້າມສຳລັບຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ**

ຫ້າມ ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ມີພຶດຕິກຳ ດັ່ງນີ້:

1. ປອມແປງ, ບິດເບືອນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງໃຫ້ແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;
2. ໃຫ້ສິນບົນແກ່ພະນັກງານ ແລະ ບຸກຄົນທີ່ກ່ຽວຂ້ອງກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 56 ຂໍ້ຫ້າມສຳລັບເຈົ້າໜ້າທີ່, ຄະນະສືບຫາຂໍ້ມູນ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່, ຄະນະສືບຫາຂໍ້ມູນ ແລະ ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ, ພັກພວກ, ຈຸ້ມເຊື້ອ ແລະ ການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ;
2. ຮັບສິນບົນຈາກຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ນຳເຂົ້າສິນຄ້າທີ່ຖືກພິຈາລະນາ;
3. ປອມແປງເອກະສານ, ເປີດເຜີຍຂໍ້ມູນ, ເອກະສານທີ່ເປັນຄວາມລັບ;
4. ກົດໜ່ວງ ແກ່ຍາວເວລາໃນການພິຈາລະນາເອກະສານ ຂອງຜູ້ຜະລິດສິນຄ້າພາຍໃນ, ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ໂດຍບໍ່ມີເຫດຜົນ;
5. ສົມຮູ້ຮ່ວມຄິດກັບຜູ້ຜະລິດສິນຄ້າພາຍໃນ, ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ເພື່ອທຳລາຍ ຫຼື ປົກປິດເຊື່ອງອຳຂໍ້ມູນຫຼັກຖານ;
6. ເມີນເສີຍຕໍ່ການປະຕິບັດໜ້າທີ່ຂອງຕົນ ເມື່ອພົບເຫັນຄວາມເສຍຫາຍ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ

**ມາດຕາ 57 ອົງການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
3. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ, ນະຄອນ.

**ມາດຕາ 58 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ເພື່ອສະເໜີລັດຖະບານພິຈາລະນາ;

2. ຫັນລະອຽດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ເປັນແຜນການ, ແຜນງານ, ໂຄງການ ລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກ ງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

4. ຄົ້ນຄວ້າ ແລະ ສະເໜີ ລັດຖະບານ ພິຈາລະນາຕົກລົງ ຫຼື ຍົກເລີກການນຳໃຊ້ມາດຕະການຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

5. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

6. ຕິດຕາມ ການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບຜົນກະທົບຈາກການທຸ່ມ ຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

7. ສ້າງ, ບຳລຸງ, ແຕ່ງຕັ້ງເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍ ພ້ອມທັງຍົກ ລະດັບພະນັກງານວິຊາການກ່ຽວກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງ ອອກ;

8. ປຶກສາຫາລື ແລະ ປະສານສົມທົບກັບບັນດາກະຊວງ, ອົງການ, ຂະແໜງການອື່ນ ແລະ ອົງການ ປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

9. ປະສານ, ພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນກັບສາກົນກ່ຽວກັບວຽກງານຕອບໂຕ້ ການ ທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດ ໜູນ ຂອງປະເທດຜູ້ສົ່ງອອກ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 59 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຫັນລະອຽດ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານກ່ຽວກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງ ອອກ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກ ງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ໃຫ້ແກ່ສັງຄົມ;

3. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ໃນ ການຈັດຕັ້ງປະຕິບັດວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

4. ຮັບການສະເໜີ ແລະ ການແຈ້ງຂໍ້ມູນ ກ່ຽວກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການ ອຸດໜູນ ຂອງປະເທດຜູ້ສົ່ງອອກ ຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອລາຍງານ ກະຊວງອຸດສາຫະກຳ ແລະ ການ ຄ້າ ພິຈາລະນາ;

5. ຕິດຕາມ ການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບຜົນກະທົບຈາກການທຸ່ມ ຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງຂັ້ນເທິງກ່ຽວກັບວຽກງານຕອບໂຕ້ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

2. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

3. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

4. ຕິດຕາມ ການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບຜົນກະທົບຈາກການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 61 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບຮັກສາ ຫຼື ສົ່ງຄືນ ເງິນຄ້ຳປະກັນ ຈາກການນຳໃຊ້ມາດຕະການຊົ່ວຄາວ;

2. ເກັບ ຫຼື ສົ່ງຄືນ ຄ່າພາສີສິນຄ້ານຳເຂົ້າ ຈາກການນຳໃຊ້ມາດຕະການທົ່ວໄປ;

3. ປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າການເພີ່ມອັດຕາພາສີສິນຄ້ານຳເຂົ້າ ເພື່ອຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

4. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບການເກັບຮັກສາ ຫຼື ສົ່ງຄືນ ເງິນຄ້ຳປະກັນ ຈາກການນຳໃຊ້ມາດຕະການຊົ່ວຄາວ ແລະ ຄ່າພາສີນຳເຂົ້າ ຈາກການນຳໃຊ້ມາດຕະການທົ່ວໄປ;

5. ສະຫຼຸບ, ລາຍງານ ວຽກງານກ່ຽວກັບການຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຕໍ່ ລັດຖະບານ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື, ສະໜອງຂໍ້ມູນ, ປະສານສົມທົບ ແລະ ຕິດຕາມ ກັບຂະແໜງອຸດສາຫະກຳ ແລະ ການຄ້າ ໃນການເຄື່ອນໄຫວວຽກງານ

ຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ

**ມາດຕາ 63 ອົງການກວດກາວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ**

ອົງການກວດກາວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ມີ ດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 64 ເນື້ອໃນການກວດກາວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ**

ການກວດກາວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານ, ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍ.

**ມາດຕາ 65 ຮູບການການກວດກາວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ**

ການກວດກາວຽກງານຕອບໂຕ້ ການທຸ່ມຕະຫຼາດ ແລະ ການອຸດໜູນ ຂອງປະເທດຜູ້ສົ່ງອອກ ມີຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມກົດໝາຍ, ແຜນການ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

໓. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາ ໃນກໍລະນີມີຄວາມຈຳເປັນຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 66 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 67 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ພາກທີ IX
## ບົດບັນຍັດສຸດທ້າຍ

### ມາດຕາ 68 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 69 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້